CONSUMER DIRECT CARE NETWORK WASHINGTON

<Client Name>
<Mailing Address>
<City>< State><Zip>

ວັນທີ 02 ສິງຫາ 2021

ຮຽນທ່ານ <Client Name> ທີ່ຮັກແພງ,

ວິທີການຈ້າງງານ ແລະ ການຈ່າຍເງິນໃຫ້ຜູ້ໃຫ້ບໍລິການສ່ວນບຸກຄົນຂອງທ່ານ ແມ່ນຈະມີການປ່ຽນແປງ. ເຄືອຂ່າຍການດູແລຜູ້ບໍລິໂພກໂດຍກົງແຫ່ງກຸງວໍຊິງຕັນ (CDWA) ຈະມາເປັນໂຄງການຜູ້ບໍລິໂພກເປັນຜູ້ຄອບຄຸມນາຍຈ້າງ (CDE) ຂອງບັນດາຜູ້ໃຫ້ບໍລິການສ່ວນບຸກຄົນ (IP) ທຸກຄົນ. ໃນວັນທີ 1 ເດືອນກັນຍາ, ທ່ານ ແລະ IP ຂອງທ່ານ ຈະໄດ້ຮັບຂໍ້ມູນເພີ່ມຕື່ມ ກ່ຽວກັບສິ່ງທີ່ທ່ານຕ້ອງໄດ້ເຮັດ ສຳລັບການຫັນປ່ຽນເປັນ CDE. ເຊິ່ງຈະມີການປ່ຽນແປງເລັກນ້ອຍ ສຳລັບທ່ານ. ເຖິງແນວໃດກໍຕາມ, ມັນກໍຈະມີການປ່ຽນແປງ ສຳລັບ IP ຂອງທ່ານເຊັ່ນກັນ.

ບັນດາ IP ທັງໝົດ ຈະຖືກຫັນປ່ຽນຈາກການເຮັດສັນຍາກັບ DSHS ໄປເປັນການຈ້າງງານຈາກ CDWA. ສະພາແຫ່ງລັດວໍຊິງຕັນ ໄດ້ອອກຄຳສັ່ງໃຫ້ມີການປ່ຽນແປງວິທີການດຳເນີນງານຂອງໂຄງການເບິ່ງແຍງດູແລສ່ວນຕົວນີ້. CDWA ຈະມາເປັນນາຍຈ້າງຕາມກົດໝາຍຂອງບັນດາ IP ທັງໝົດ. CDWA ຈະຮັບຜິດຊອບໃນການວ່າຈ້າງ, ການຈ່າຍເງິນເດືອນ ແລະ ການຕິດຕາມກວດກາການໝົດອາຍຸຂອງຂໍ້ມູນປະຈຳຕົວຂອງ IP ເຊັ່ນ: ການກວດກາປະຫວັດຄວາມເປັນມາ ແລະ ການຝຶກອົບຮົມ.

ໃນນາມເປັນລູກຄ້າຄົນໜຶ່ງ, ທ່ານ ຫຼື ຜູ້ຕາງໜ້າທີ່ໄດ້ຮັບອະນຸຍາດຂອງທ່ານ ຈະສືບຕໍ່ເປັນຜູ້ຄຸ້ມຄອງບໍລິຫານນາຍຈ້າງຂອງ IP ຂອງທ່ານ. IP ຂອງທ່ານຈະຕ້ອງປະກອບເອກະສານການຈ້າງງານຂອງພວກເຂົາ ໃຫ້ແລ້ວສຳເລັດກ່ອນວັນທີ 1 ຕຸລາ 2021.

ທ່ານໄດ້ຮັບການຄັດເລືອກຈາກ DSHS ເພື່ອເຂົ້າຮ່ວມໃນການທົດລອງ.

- ໃນຖານະເປັນສ່ວນໜຶ່ງຂອງການທົດລອງ, ທ່ານ ແລະ IP ຂອງທ່ານ ຈະມີໂອກາດໃນການໃຫ້ຄຳຕຳຫນິຕິຊົມກ່ຽວກັບສິ່ງທີ່ພວກທ່ານໄດ້ປະສົບພົບພໍ້.
- ທ່ານອາດຈະຮູ້ຈັກບຸກຄົນອື່ນທີ່ໄດ້ຮັບ ຫຼື ໃຫ້ການບໍລິການເບິ່ງແຍງດູແລ ແຕ່ຈະບໍ່ຖືກລວມເຂົ້າໃນກຸ່ມທົດລອງ. ບຸກຄົນເຫຼົ່ານີ້ ຈະຖືກຫັນປ່ຽນໄປຍັງ CDWA ໃນຕົ້ນປີໜ້າ ໂດຍຂຶ້ນກັບທີ່ຢູ່ຂອງລູກຄ້າ.
- ວິທີທີ່ໄວທີ່ສຸດ ແລະ ປອດໄພທີ່ສຸດ ທີ່ພວກເຮົາຈະໃຊ້ສື່ສານກັບທ່ານແມ່ນທາງອີເມວ. ຂໍໃຫ້ເຮັດໃຫ້ແນ່ໃຈວ່າ ພະນັກງານການເງິນຂອງDSHS ມີຂໍ້ມູນຕິດຕໍ່ໃນບັດຈຸບັນຂອງທ່ານແລ້ວ.
- ຖ້າທ່ານບໍ່ມີອີເມວ, ພວກເຮົາສາມາດຊ່ວຍຕັ້ງອັນໜຶ່ງໃຫ້ທ່ານໄດ້ໂດຍບໍ່ເສຍຄ່າ. ຖ້າທ່ານສົນໃຈທີ່ຈະຕັ້ງທີ່ຢູ່ອີເມວ, ກະລຸນາຕິດຕໍ່ຫາພວກເຮົາທີ່ເບີ: 866-214-9899.

CONSUMER DIRECT CARE NETWORK WASHINGTON

ຮຽນຮູ້ເພີ່ມຕື່ມກ່ຽວກັບ CDE.

ການສຳມະນາຂໍ້ມູນຂ່າວສານທາງເວັບ (ເປີດໃຫ້ສາທາລະນະ)

- ກຽມຕົວໃຫ້ພ້ອມ ສຳລັບ CDE, ວັນອັງຄານ, ວັນທີ 8/3/2021, ເວລາ 9:00 ໂມງເຊົ້າ PDT
- ການປ່ຽນແປງກຳນົດເວລາໃນການຈ່າຍເງິນເດືອນ ແລະ ຂີດຈຳກັດອາທິດການເຮັດວຽກ (WWL), ວັນອັງຄານ, ວັນທີ 8/10/2021, 3:00 ໂມງແລງ PDT
- ຄວາມຮັບຜິດຊອບຂອງລູກຄ້າ, ວັນຈັນ, ວັນທີ 8/16/2021, 9:00 ໂມງເຊົ້າ PDT
- ຜູ້ໃຫ້ບໍລິການເປັນພໍ່ແມ່ ແລະ ຜູ້ໃຫ້ບໍລິການພັກອາໄສຢູ່ນຳ, ວັນພະຫັດ ວັນທີ 8/26/2021, 3:00 ໂມງແລງ PDT

ການສຳມະນາທາງເວັບກ່ຽວກັບທົດລອງ (ເປີດໃຫ້ບັນດາລູກຄ້າ ແລະ IP ທີ່ເຂົ້າຮ່ວມການທົດລອງ)

- ການທົດລອງ: ກຽມຕົວໃຫ້ພ້ອມ, ວັນພະຫັດ, ວັນທີ 8/19/2021, 3:00 ໂມງແລງ PDT
- ການທົດລອງ: ຂະບວນການຈ້າງງານ, ວັນອັງຄານ, ວັນທີ 8/24/2021, 3:00 ໂມງແລງ PDT
- ການທົດລອງ: ການສົ່ງເວລາ ແລະ ການຮັບເງິນເດືອນ, ວັນພຸດ, ວັນທີ 8/25/2021, 9:00 ໂມງເຊົ້າ PDT

ລິ້ງເຊື່ອມຕໍ່ການລົງທະບຽນ ສຳລັບການສຳມະນາທາງເວັບເຫຼົ່ານີ້ ແມ່ນມີຢູ່ໃນເວັບໄຊຂອງ CDWA ທີ່: www.ConsumerDirectWA.com/Resources.

ຕິດຕໍ່ CDWA

ອີເມວ: InfoCDWA@ConsumerDirectCare.com
ໝາຍເລກໂທລະສັບໂທຟຼີ: 866-214-9899
ເວັບໄຊ: www.ConsumerDirectWA.com

ພວກເຮົາຈະຕິດຕໍ່ຫາທ່ານທາງໂທລະສັບ ເພື່ອຕິດຕາມຈົດໝາຍສະບັບນີ້. ກະລຸນາຕິດຕໍ່ພວກເຮົາທາງໂທລະສັບ ຫຼື ອີເມວ ຖ້າທ່ານມີຄຳຖາມ.

ດ້ວຍຄວາມນັບຖື,
ທີມງານເຄືອຂ່າຍການດູແລຜູ້ບໍລິໂພກໂດຍກົງແຫ່ງກຸງວໍຊິງຕັນ

ການຊ່ວຍເຫຼືອເປັນພາສາ ແລະ ຮູບແບບອື່ນໆ
ສຳລັບຄົນຫູໜວກ ແລະ ມີຄວາມບົກພ່ອງທາງຫູ: 877-398-7969

Arabic العربية	866.215.6909	Cantonese 粵語	866.216.3065	Khmer អក្សរខ្មែរ	866.215.7610	Korean 한국어	866.215.6907
Lao ພາສາລາວ	866.215.8044	Mandarin 普通话	866.216.1752	Russian русский	866.215.4069	Somali Soomaali	866.215.5669
Spanish Español	866.215.0131	Tagalog Tagalog	866.215.3817	Ukrainian Українська	866.215.4674	Vietnamese tiếng Việt	866.215.2762